BCEL ເປີດໂຕໃຫ້ບໍລິການຂາຍປະກັນໄພ AGL ອອນລາຍ ຜ່ານແອັບພິເຄຊັນ BCEL One



ໃນຕອນບ່າຍ ຂອງ ວັນພະຫັດ ວັນທີ 11/12/2025 ທີ່ ໂຮງແຮມ ອາມາຣີ ວຽງຈັນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຮ່ວມກັບ ບໍລິສັດ ປະກັນໄພແຫ່ງຊາດລາວ ຈຳກັດຜູ້ດຽວ (AGL) ໄດ້ມີພິທີເປີດຕົວໃຫ້ບໍລິການຂາຍປະກັນໄພອອນລາຍຄົບວົງຈອນຂຶ້ນ.



ພິທີລົງນາມໃນສັນຍາຄູ່ຮ່ວມທຸລະກິດຄັ້ງນີ້ ໄດ້ຈັດຂຶ້ນຢ່າງເປັນທາງການ ຕາງໜ້າລົງນາມຈາກທັງສອງຝ່າຍ ໂດຍ **ທ່ານ ນັນທະລາດ ແກ້ວປະເສີດ** (ຮອງຜູ້ອຳນວຍການ BCEL) ແລະ **ທ່ານ ປອ. ນ. ແສງອາລຸນ ອິນມີໄຊ** (ຮັກສາການ ຜູ້ອຳນວຍການ ບໍລິສັດ AGL). ໂດຍໃຫ້ກຽດເຂົ້າຮ່ວມ ເປັນສັກຂີພະຍານຂອງ **ທ່ານ ບົວຈັນ ແກ້ວມະນີ (ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ - ທຫລ)** ພ້ອມດ້ວຍຄະນະຜູ້ບໍລິຫານ-ພະນັກງານທັງສອງຝ່າຍ, ແຂກຖືກເຊີນ ແລະ ສື່ມວນຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ການຮ່ວມມືໃຫ້ບໍລິການດັ່ງກ່າວ ຖືເປັນການໃຫ້ບໍລິການຜ່ານ BCEL One ທີ່ເຮັດໃຫ້ລູກຄ້າສາມາດດຳເນີນທຸລະກຳທາງດ້ານການເງິນ ແລະ ປະກັນໄພ ໄດ້ພາຍໃນແອັບດຽວ. ໂດຍມີເປົ້າໝາຍໃນການໃຫ້ບໍລິການທີ່ດີທີ່ສຸດໃຫ້ແກ່ສັງຄົມ, ສົ່ງເສີມການເຂົ້າເຖິງບໍລິການປະກັນໄພໃຫ້ແກ່ ປະຊາຊົນລາວຢ່າງກວ້າງຂວາງ, ເຮັດໃຫ້ການປົກປ້ອງຊີວິດ ແລະ ຊັບສິນ ເປັນເລື່ອງທີ່ງ່າຍ ແລະ ວ່ອງໄວຂຶ້ນ ເຊິ່ງລູກຄ້າສາມາດເລີ່ມຕົ້ນ ຊື້ປະກັນໄພໄດ້ທັນທີຜ່ານແອັບພິເຄຊັນ BCEL One ໄດ້ຕັ້ງແຕ່ມື້ນີ້ເປັນຕົ້ນໄປ.



ຂ່າວໂດຍ: ຂະແໜງ ພົວພັນນັກລົງທຶນ ແລະ ຮ່ວມມືສາກົນ https://www.bcel.com.la/ **Email:** bcelhqv@bcel.com.la